| ຂໍ້ມູນທີ່ໄດ້ຮັບຈາກຂະແໜງການທີ່ກ່ຽວຂ້ອງ | |
|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດດຳເນີນທຸລະກິດການໃຫ້ບໍລິການຊຳລະ |
| **ປະເພດເອກະສານ** | ໃບອະນຸຍາດດຳເນີນທຸລະກິດ |
| **ວັນທີແກ້ໄຂຂໍ້ມູນລ່າສຸດ** | 04.01.2021 |
| **ພາກສ່ວນຮັບຜິດຊອບ** | ກົມຄຸ້ມຄອງລະບົບການຊຳລະ<br>(021 253595;) |
| **ຜູ້ທີ່ສາມາດຍື່ນຂໍເອກະສານ** | ທະນາຄານທຸລະກິດ, ນິຕິບຸກຄົນ ແລະ<br>ສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ |
| **ເງື່ອນໄຂໃນການຂໍເອກະສານ** | 1. ການຂໍອະນຸຍາດເປັນຜູ້ຄວບຄຸມລະບົບການຊຳລະເງິນທົ່ວໄປ ປະກອບດ້ວຍເງື່ອນໄຂ ດັ່ງນີ້: 1.1. ເປັນນິຕິບຸກຄົນ;1.2. ມີຖານະການເງິນທີ່ໝັ້ນຄົງ ແລະ ທຶນໃນການດຳເນີນທຸລະກິດ ຕາມການກຳນົດຂອງ ທະນາຄານແຫ່ງ ສປປ ລາວ;1.3. ມີບົດວິພາກເສດຖະກິດ-ເຕັກນິກ; 1.4. ມີຜູ້ບໍລິຫານ ທີ່ມີຄຸນວຸດທິ, ປະສົບການທາງດ້ານການເງິນ-ການທະນາຄານ, ເຕັກໂນໂລຊີຂໍ້ມູນ ຂ່າວສານ ຫຼື ຂະແໜງອື່ນທີ່ກ່ຽວຂ້ອງ ພ້ອມທັງບໍ່ເຄີຍຖືກສານຕັດສິນລົງໂທດທາງອາຍາ ໃນການກະທຳຜິດໂດຍເຈດຕະນາ ເປັນຕົ້ນ ການກະທຳຜິດທາງດ້ານການເງິນ, ການທະນາຄານ, ການຟອກເງິນ;1.5. ມີພະນັກງານ ທີ່ມີຄວາມຮູ້, ຄວາມສາມາດ ທາງດ້ານການເງິນ-ການທະນາຄານ, ເຕັກໂນໂລຊີ ຂໍ້ມູນ ຂ່າວສານ ຫຼື ຂະແໜງອື່ນທີ່ກ່ຽວຂ້ອງ;1.6. ມີລະບົບການດຳເນີນງານ ລວມທັງລະບົບເຕັກໂນໂລຊີ ຂໍ້ມູນ ຂ່າວສານ ແລະ ລະບົບການຄວບຄຸມພາຍໃນ;1.7. ມີສະຖານທີ່ຕັ້ງທີ່ເໝາະສົມ;1.8. ເງື່ອນໄຂອື່ນ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ.2. ການຂໍອະນຸຍາດເປັນຜູ້ໃຫ້ບໍລິການຊຳລະເງິນ ປະກອບດ້ວຍເງື່ອນໄຂ ດັ່ງນີ້:2.1. ມີເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 1 ຂອງມາດຕານີ້;2.2. ມີລະບົບປ້ອງກັນຊັບສິນ ທີ່ໄດ້ມາຈາກຜູ້ໃຊ້ບໍລິການ ຫຼື ຜ່ານຜູ້ໃຫ້ບໍລິການຊຳລະເງິນອື່ນ;2.3. ມີລະບົບການເຊື່ອມຕໍ່ກັບລະບົບການຊຳລະເງິນ ໃນ ສປປ ລາວ. |

| ກົດໝາຍ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່** | **ເລກທີ** | **ລົງວັນທີ** | **ໝາຍເຫດ** |
| ຂໍ້ຕົກລົງ ວ່າດ້ວຍການໃຫ້ບໍລິການຊຳລະ | 288/ທຫລ | 17.03.2020 | |
| ກົດໝາຍວ່າດ້ວຍລະບົບການຊຳລະ (ສະບັບປັບປຸງ) | 45/ສພຊ | 20.11.2023 | |

| ໃບອະນຸຍາດດຳເນີນການ ຫລື ເອກະສານທີ່ຈຳເປັນ ຫລື ຕິດພັນ | | |
|---|---|---|
| **ຊື່** | **ປະເພດ** | **ໝາຍເຫດ** |
| ${SUPPORT_NAME} | ${SUPPORT_TYPE} | ${SUPPORT_COMMENT} |

| ເອກະສານທີ່ຕ້ອງປະກອບສຳລັບການຍື່ນຂໍເອກະສານ |
|---|

| **ຊື່ເອກະສານ** | **ປະເພດເອກະສານ** | **ຕົວຢ່າງເອກະສານ** |
|---|---|---|
| ${ATTACHMENT_NAME} | ${ATTACHMENT_TYPE} | ${ATTACHMENT_FILE} |

| **ເອກະສານທີ່ຕ້ອງປະກອບສໍາລັບການຕໍ່ອາຍຸ** | | |
|---|---|---|
| ຊື່ເອກະສານ | ປະເພດເອກະສານ | ຕົວຢ່າງເອກະສານ |
| ${ATTACHMENT_NAME_RENEW} | ${ATTACHMENT_TYPE_RENEW} | ${ATTACHMENT_FILE_RENEW} |

| **ຮູບແບບການຍື່ນເອກະສານ** | | |
|---|---|---|
| **ການຍື່ນເອກະສານ** | ຢູ່ທີ່ຫ້ອງການເຈົ້າໜ້າທີ່ | |
| **ທີ່ຢູ່ຂອງພາກສ່ວນທີ່ຮັບຜິດຊອບ** | ກົມຄຸ້ມຄອງລະບົບການຊໍາລະ, ທະນາຄານແຫ່ງ ສປປ ລາວ | |
| **ໄລຍະເວລາໃນການພິຈາລະນາຄໍາຮ້ອງ (ວັນ)** | 30 | ນິຕິກໍາ: ຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຊໍາລະ ສະບັບເລກທີ 288/ທຫລ, ລົງວັນທີ 17 ມີນາ 2020, ມາດຕາ 15 (ເອກະສານປະກອບການໃຫ້ບໍລິການຊໍາລະທີ່ຕ້ອງໄດ້ຮັບອະນຸຍາດ), ຕິດຕໍ່ປະສານປະກອບເອກະສານເອກະສານຕາມ Checklist ຂອງກົມຄຸ້ມຄອງລະບົບການຊໍາລະ ວາງອອກ |

| **ການຕໍ່ອາຍຸເອກະສານ** | |
|---|---|
| **ເອກະສານມີກໍານົດອາຍຸ ຫຼື ບໍ່?** | **ໃບອະນຸຍາດມີອາຍຸການນໍາໃຊ້ຈັກເດືອນ?** |
| ມີ | 60 |
| **ຂັ້ນຕອນ ແລະ ເງື່ອນໄຂສໍາລັບການຕໍ່ອາຍຸເອກະສານ** | |
| **ຂັ້ນຕອນ ແລະ ເງື່ອນໄຂສໍາລັບການຕໍ່ອາຍຸໃບອະນຸຍາດ** | ໃບອະນຸຍາດ ມີອາຍຸການນໍາໃຊ້ 5 ປີ ຕາມຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຊໍາລະ ສະບັບເລກທີ 288/ທຫລ, ລົງວັນທີ 17 ມີນາ 2020, ມາດຕາ 22 (ການນໍາໃຊ້ ແລະ ອາຍຸການນໍາໃຊ້) |

| **ຄ່າທໍານຽມສໍາລັບການຍື່ນຂໍເອກະສານ** |
|---|

| **ມີຄ່າໃບຄຳຮ້ອງ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທຳນຽມທາງວິຊາການ** | **ຄ່າແບບຟອມຄຳຮ້ອງ** | | **ຄ່າໃຊ້ຈ່າຍທັງໝົດ** |
|---|---|---|---|---|---|
| ມີ | 2000000.00 | 0.00 | 0.00 | | 2000000.00 |
| **Comments** | ຄ່າທຳນຽມໃນການອະນຸຍາດເປັນຜູ້ໃຫ້ບໍລິການຊຳລະ ຈຳນວນ ສູນຈຸດໜຶ່ງສ່ວນຮ້ອຍ (0,1%) ຂອງທຶນຈົດທະບຽນ ຕາມຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຊຳລະ ສະບັບເລກທີ 288/ທຫລ, ລົງວັນທີ 17 ມີນາ 2020, ມາດຕາ 24 (ຄ່າທຳນຽມ, ຄ່າບໍລິການ ແລະ ຄ່າຄຸ້ມຄອງປະຈຳປີ) ສຳລັບ ສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ແລະ ການໃຫ້ບໍລິການຊຳລະທີ່ຕ້ອງແຈ້ງໃຫ້ຊາບ ແມ່ນຖືກຍົກເວັ້ນ ຄ່າທຳນຽມ ແລະ ຄ່າຄຸ້ມຄອງປະຈຳປີ. | | | | |
| **ຄ່າບໍລິການເພີ່ມເຕີມ** | | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 | |
| **ຄຳ ເຫັນຄ່າ ທຳນຽມເພີ່ມເຕີມ** | | | | | |

| **ຄ່າທຳນຽມສຳລັບການຂໍຕໍ່ອາຍຸເອກະສານ** | | | | |
|---|---|---|---|---|
| **ມີຄ່າຕໍ່ອາຍຸເອກະສານ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທຳນຽມທາງວິຊາການ** | **ຄ່າໃບຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 1000000.00 | 0.00 | 0.00 | 1000000.00 |
| **ຄຳເຫັນ** | ຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຊຳລະ ສະບັບເລກທີ 288/ທຫລ, ລົງວັນທີ 17 ມີນາ 2020, ມາດຕາ 24 (ຄ່າທຳນຽມ, ຄ່າບໍລິການ ແລະ ຄ່າຄຸ້ມຄອງປະຈຳປີ) | | | |
| ຄ່າໃຊ້ຈ່າຍອື່ນໆ | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄຳ ເຫັນກ່ຽວກັບຄ່າ ທຳນຽມຕໍ່ອາຍຸເພີ່ມເຕີມ** | | | | |